ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 090 /ທຄຕລ. 2019
ນະຄອນຫຼວງວຽງຈັນ, ວັນທີ: 16 DEC 2019

# ໜັງສືແຈ້ງເຊີນ

ເຖິງ: ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ຢູ່ໃນນະຄອນຫລວງວຽງຈັນ.
ເລື່ອງ: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງໄອທີ server ແລະ F5 Load balancer .

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງເຊີນມາຍັງທ່ານ ເພື່ອຍື່ນຊອງເຂົ້າຮ່ວມປະມູນເຄື່ອງອຸປະກອນໄອທີ server ຈຳນວນ 20 ເຄື່ອງ ແລະ F5 Load balancer ຈຳນວນ 04 ໜ່ວຍ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລຳດັບ | ອຸປະກອນ | ເງື່ອນໄຂກ່ຽວກັບສະເປັກເຄື່ອງ | ຈຳນວນ |
|---|---|---|---|
| 1 | Intel server | Intel<br>CPU : 96 cores (24 core 3.2 GHz per CPU, 4 Socket )<br>RAM: 1TB<br>Internal Storage SSD 512 GB x 4 RAID 6<br>NIC:SFP+ 10 Gbps x 8<br>FC: 16 Gbps x 8 | 8 |
| 2 | Intel server | Intel<br>CPU : 48 cores (24 core 3.2 GHz per CPU, 2 Socket )<br>RAM: 512 GB<br>Internal Storage SSD 512 GB x 4 RAID 6<br>NIC:SFP+ 10 Gbps x 8<br>FC: 16 Gbps x 8 | 4 |
| 3 | IBM server | IBM Power S924<br>CPU : 20 cores (3.0 GHz up ) SMT8<br>RAM: 1TB<br>Internal Storage:<br>SSD 512 GB x 4<br>NIC: SFP+ 10 Gbps x 8<br>FC: 16 Gbps x 8 | 8 |
| 4 | F5 Load balancer | Model: I5600<br>NIC: SFP+ 10 Gbps x8 | 4 |

1. ເງື່ອນໄຂຂອງບໍລິສັດ, ຫ້າງຮ້ານຜູ້ສະໜອງ ທີ່ຈະຍື່ນຊອງປະມູນຕ້ອງປະກອບມີລາຍການດັ່ງນີ້ :
   - **ບັນຈຸໃສ່ຊອງທີ1 (ບໍ່ປິດຊອງ):** ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບພັນທະອາກອນປີປະຈຸບັນ, ໃບຢັ້ງຢືນເປັນຕົວແທນຈຳໜ່າຍ, ໃບຢັ້ງຢືນເຄື່ອງໄອທີປີທີຜະລິດສິນຄ້າ ( SERIES ), ປະເທດທີ່ຜະລິດ, ລະບຸໄລຍະເວລາໃນການຮັບປະກັນ ແລະ ຜົນງານຂອງບໍລິສັດຫ້າງຮ້ານຜ່ານມາຢ່າງໜ້ອຍປະສົບການ 03 ປີ ຂຶ້ນໄປ (ບົດລາຍງານ).
   - **ບັນຈຸໃສ່ຊອງທີ2 (ປິດຊອງ):** ໃບສະເໜີລາຄາຕ້ອງກຳນົດເປັນເງິນກີບລວມອາກອນ.

- ກຳນົດຍື່ນຊອງປະມູນແມ່ນວັນທີ 26/12/2019 ໃນໂມງລັດຖະການທີ່ ພະແນກຫ້ອງການບໍລິຫານ-ການເງິນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່ ທີ່ປ່ອງບໍລິການ ຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

**ໝາຍເຫດ:** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ກັບ ຜູ້ສະໜອງຊະນະການປະມູນ, ການຊຳລະຈະແບ່ງເປັນ 03 ງວດ ດັ່ງນີ້:

- ງວດທີ1: ຊຳລະລ່ວງໜ້າ 20% ຂອງມູນຄ່າພາຍຫລັງເຊັນສັນຍາທັງສອງຝ່າຍ ແລະ ສຳເລັດການຈົດທະບຽນສັນຍາຈາກພາກສ່ວນທີ່ກ່ຽວຂ້ອງ (ຄ່າທຳນຽມໃນການຈົດທະບຽນສັນຍາຄວາມຮັບຜິດຊອບຂອງຜູ້ສະໜອງ).
- ງວດທີ2: ຊຳລະ 70% ຂອງມູນຄ່າພາຍຫລັງໄດ້ຮັບເຄື່ອງ ແລະ ຕິດຕັ້ງເຄື່ອງສຳເລັດ.
- ງວດທີ3: ຊຳລະ 10% ຂອງມູນຄ່າທັງໝົດພາຍຫຼັງຄົບກຳນົດຄ້ຳປະກັນ (ໄລຍະຄ້ຳປະກັນຢ່າງໜ້ອຍ06 ເດືອນ).

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບັນທະລາດ ແກ້ວປະເສີດ